ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ເປີດການຈັດຝຶກອົບຮົມວຽກງານການກວດກາພັກ-ລັດ ໃນຂົງເຂດທະນາຄານ ປະຈຳປີ 2023



ໃນຕອນເຊົ້າຂອງວັນທີ 06 ພະຈິກ 2023 ທີ່ ສະຖາບັນການທະນາຄານ (ສທຄ). ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເປີດການຈັດຝຶກອົບຮົມວຽກງານການກວດກາພັກ-ລັດ ໃນຂົງເຂດທະນາຄານ ປະຈຳປີ 2023 ຂຶ້ນ. ໃຫ້ກຽດເຂົ້າຮ່ວມເປັນປະທານເປີດພິທີໂດຍທ່ານ ປອ. ດາວບົວລະພາ ບາວົງເພັດ ຄະນະປະຈຳພັກ, ຮອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ແລະ ທ່ານ ວຽງສະຫວັນ ໄຊຍະວົງ ກຳມະການພັກ, ຮອງປະທານຄະນະກວດກາພັກ ທຫລ, ພ້ອມດ້ວຍຜູ້ເຂົ້າຮ່ວມການຝຶກອົບຮົມຊຶ່ງເປັນພະນັກງານຂັ້ນກົມ, ຂັ້ນພະແນກ ແລະ ຜູ້ທີ່ຮັບຜິດຊອບວຽກງານກວດກາ ຢູ່ບັນດາຮາກຖານພັກ ທີ່ຂຶ້ນກັບອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ທັງໝົດ 60 ທ່ານ, ເປັນຍິງ 28 ທ່ານ.

ຈຸດປະສົງຂອງການຈັດຝຶກອົບຮົມວຽກງານການກວດກາພັກ-ລັດ ໃນຂົງເຂດທະນາຄານ ປະຈຳປີ 2023 ໃນຄັ້ງນີ້ກໍເພື່ອແນໃສ່ບັນດາຜູ້ກວດກາໜ່ວຍພັກຮາກຖານ, ຄະນະກວດກາຄະນະພັກຮາກຖານ ແລະ ໜ່ວຍພັກທີ່ຂຶ້ນກັບ ໃຫ້ກຳໄດ້ບັນດາຫຼັກການ, ຮູບການ, ວິທີການ, ຂັ້ນຕອນການວາງແຜນການກວດກາ, ກວດກາການຈັດຕັ້ງພັກ ແລະ ສະມາຊິກພັກ ເມື່ອມີປະກົດການລະເມີດ, ລະບຽບວິໄນຂອງພັກ ແລະ ກວດກາການລົງວິໄນພາຍໃນພັກ, ກວດກາພິສູດ ໃນວຽກງານກວດກາພັກ, ການແກ້ໄຂຜົນການກວດກາ ແລະ ການຕິດຕາມ, ກວດກາການປະຕິບັດຜົນການກວດກາ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ, ທັງເປັນການຍົກລະດັບຄວາມຮູ້-ຄວາມສາມາດຂອງພະນັກງານກວດກາໃນແຕ່ລະພາກສ່ວນໃຫ້ສູງຂຶ້ນ ແລະ ພ້ອມທັງນຳເອົາບົດຮຽນທີ່ໄດ້ຮຽນມາໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຂອງຕົນຢ່າງມີຫົວຄິດປະດິດສ້າງ ແລະ ໃຫ້ເກີດປະສິດທິຜົນສູງສຸດ. ຊຶ່ງຄະນະນຳ ທຫລ ຍາມໃດກໍ່ໄດ້ເອົາໃຈໃສ່ຍົກສູງ ແລະ ເພີ່ມທະວີການຝຶກອົບຮົມວຽກງານກວດກາໃນຂະແໜງການທະນາຄານ. ການ

ຝຶກອົບຮົມໃນຄັ້ງນີ້ແມ່ນຈະໄດ້ດຳເນີນໄປເປັນເວລາ 5 ວັນເຕັມ, ມີບົດຮຽນ 6 ບົດກ່ຽວກັບວຽກງານກວດກາພັກ ແລະ ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ໂດຍມີການສົມທຽບລະຫວ່າງທິດສະດີ ແລະ ພຶດຕິກຳໄປຄຽງຄູ່ກັນ. ໃນການຝຶກອົບຮົມດັ່ງກ່າວ ຜູ້ເຂົ້າຮ່ວມຈະໄດ້ຮັບການບັນຍາຍສິດສອນຈາກອາຈານທີ່ມາຈາກຄະນະກວດກາສູນກາງພັກ, ອົງການກວດກາແຫ່ງລັດທີ່ມີຕຳແໜ່ງຂັ້ນກົມຊຶ່ງລ້ວນແລ້ວແຕ່ເປັນຜູ້ທີ່ມີປະສົບການສູງໃນໜ້າທີ່ວຽກງານດັ່ງກ່າວ.







**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.**